ການຂາດສານອາຫານແມ່ນຫຍັງ?

ຈຸດປະສົງ: ເພື່ອແນະນຳຄວາມສຳຄັນຂອງໂພຊະນາການ ແລະ ອາຫານການກິນ ຂອງຄົນເຮົາໃຫ້ເຕີບໃຫຍ່ຂະຫຍາຍໂຕ ແລະ ມີສຸຂະພາບແຂງແຮງ.

ຂັ້ນຕອນ: ນຳໃຊ້ຮູບພາບຕົ້ນໄມ້ອຸດົມສົມບູນຊ່ວຍໃນການສົນທະນາ.

ອຸປະກອນ: ຮູບພາບຕົ້ນໄມ້ຂຽວງາມ

ຄຳຖາມ:

- ຮູບນີ້ແມ່ນຫຍັງ?
- ຕົ້ນໄມ້ນີ້ເບິ່ງອຸດົມສົມບູນບໍ່?
- ແມ່ນຫຍັງທີ່ເຮັດໃຫ້ຕົ້ນໄມ້ນີ້ອຸດົມສົມບູນ ແລະ ງອກງາມ?
- ພວກເຮົາຈະປູກຕົ້ນໄມ້ໃຫ້ໃຫຍ່ສູງ ແລະ ແຂງແຮງໄດ້ແນວໃດ?

ສະຫຼຸບ: ຄົນເຮົາກໍ່ເຊັ່ນດຽວກັບຕົ້ນໄມ້ນີ້, ທີ່ຕ້ອງການນ້ຳ, ຝຸ່ນ ແລະ ແສງແດດ ເພື່ອໃຫ້ຈະເລີນເຕີບໃຫຍ່ ແລະ ມີໝາກຜົນດົກໝາ, ຮ່າງກາຍ ແລະ ສະໝອງ ຂອງຄົນກໍ່ເຊັ່ນດຽວກັນ ມີຄວາມຕ້ອງການສານອາຫານຫຼາກຫຼາຍ ເພື່ອໃຫ້ ເຕີບໃຫຍ່ ແລະ ພັດທະນາໄດ້ດີ ພ້ອມທັງແຂງແຮງພໍທີ່ຈະຕ້ານທານກັບພະຍາດ ເຊື້ອໂລກໄດ້.

ບົດຕໍ່ໄປແມ່ນ: ການສົມທຽບຕົ້ນໄມ້ທີ່ຂຽວງາມແຂງແຮງກັບຕົ້ນໄມ້ທີ່ຫ່ຽວ ແຫ້ງບໍ່ແຂງແຮງ.